**ມິຊຊາອາທິດທີ 1 ກຳນົດບຳເພັນສິນ B**

**ວັນທີ 21 ກຸມພາ 2021**



**ພຣະວໍລະສານໂດຍນັກບຸນມັກໂກ 1, 12-15**

ໃນເວລານັ້ນ, ພຣະຈິດເຈົ້າຊົງພາພຣະເຢຊູເຈົ້າສະເດັດໄປໃນທີ່ປ່ງວ. ພຣະອົງໄດ້ປະທັບຢູ່ທີ່ປ່ງວເປັນໝູ່ກັບສັດປ່າເປັນເວລາສີ່ສິບວັນ.ຊົງຖືກຜີຊາຕານມາຫລອກລວງ ແລະມີເທວະດາມາຮັບໃຊ້ພຣະອົງ. ເມື່ອຢວງໄດ້ຖືກຈັບແລ້ວ, ພຣະເຢຊູເຈົ້າກໍສະເດັດມາແຂວງກາລິເລເພື່ອປະກາດພຣະວໍຣະສານຂອງພຣະເຈົ້າວ່າ: "ເຖິງກຳນົດແລ້ວແລະອານາຈັກຂອງພຣະເຈົ້າກໍໃກ້ເຂົ້າມາແລ້ວດ້ວຍ. ຈົ່ງເປັນທຸກກັບໃຈແລະເຊື່ອພຣະວໍລະສານເຖີດ."

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 1, 12-15**

ວັນອາທິດທີໜຶ່ງກຳນົດບຳເພັນສິນ, ພຣະກຣິສຕະຈັກໃຫ້ພວກເຮົາໄດ້ຟັງແລະລຳເພິງເຖິງສິ່ງສ້າງຂອງພຣະເຈົ້າ. ໂລກເກົ່າທີ່ຖືກທຳລາຍຍ້ອນບາບ. ແລະໂລກໃໝ່ທີ່ໄດ້ຮັບການໄຖ່ກູ້ດ້ວຍອາໄສການທໍລະມານແລະຕາຍຂອງພຣະເຢຊູເຈົ້າ.

ໃນບົດອ່ານທີໜຶ່ງຈາກໜັງສືປະຖົມມະການໄດ້ເລົ່າໃຫ້ພວກເຮົາຮູ້ວ່າໃນສະໄໝຂອງທ່ານນໍແອ, ຄົນທັງຫລາຍໄດ້ມົວເມົານຳການຫລິ້ນ, ການກິນ, ຄວາມມ່ວນຊື່ນຂອງໂລກແລະລືມພຣະເຈົ້າໄປ. ໃນບັນດາຄົນເຫລົ່ານັ້ນ, ກໍມີທ່ານນໍແອແລະຄອບຄົວຂອງທ່ານຊຶ່ງເປັນຄົນທ່ຽງທຳແລະຢ້ານຈຽມພຣະເຈົ້າ. ດ້ວຍເຫດນີ້, ພຣະເຈົ້າຈຶ່ງໄດ້ໃຫ້ທ່ານນໍແອແລະຄອບຄົວຂອງທ່ານຫລຸດພົ້ນອອກຈາກການລົງໂທດຂອງພຣະອົງ. ໂດຍທີ່ຄອບຄົວຂອງທ່ານນໍແອໄດ້ປອດໄພຢູ່ໃນສຳເພົາ. ສ່ວນຄົນອື່ນນັ້ນໄດ້ຈົມຢູ່ໃນນ້ຳພິນາດ. ແບບຢ່າງຂອງທ່ານນໍແອແລະຄອບຄົວຂອງທ່ານເປັນສິ່ງຢັ້ງຢືນໃຫ້ພວກເຮົາຮູ້ວ່າ ສິ່ງທີ່ພຣະເຈົ້າສ້າງມານັ້ນລ້ວນແຕ່ດີງາມ. ແຕ່ມະນຸດໄດ້ປະປ່ອຍຈິດໃຈຕົວເອງໃຫ້ຕົກຢູ່ໃນບາບ. ດ້ວຍເຫດນີ້, ພຣະເຈົ້າຈຶ່ງໄດ້ລົງໂທດພວກເຂົາ. ເມື່ອພຣະເຈົ້າໄດ້ລົງໂທດປະຊາກອນຂອງພຣະອົງແລ້ວ, ພຣະອົງກໍເກີດມີຄວາມສົງສານຈຶ່ງໄດ້ສັນຍາວ່າ ແຕ່ນີ້ຕໍ່ໄປພຣະອົງຈະບໍ່ທຳຮ້າຍປະຊາກອນຂອງພຣະອົງອີກ. ສິ່ງທີ່ຄ້ຳປະກັນຄຳໝັ້ນສັນຍາຂອງພຣະເຈົ້ານີ້ແມ່ນພັນທະສັນຍາທີ່ພຣະອົງກະທຳກັບປະຊາກອນຂອງພຣະອົງອັນແມ່ນເຄື່ອງໝາຍຂອງສາຍລຸ້ງທີ່ເສື່ອມຕໍ່ລະຫວ່າງຟ້າກັບແຜ່ນດິນ.

ສ່ວນໃນບົດອ່ານທີສອງ, ນັກບຸນເປໂຕໄດ້ອະທິບາຍໃຫ້ພວກເຮົາເຂົ້າໃຈເລິກເຊິ່ງໄປອີກວ່າ: ສາຍລຸ້ງທີ່ເສື່ອມຕໍ່ລະຫວ່າງຟ້າແລະແຜ່ນດິນນັ້ນແມ່ນໄມ້ກາງເຂນຂອງພຣະເຢຊູກຣິສໂຕເຈົ້ານັ້ນເອງ. ຫລືເວົ້າອີກຢ່າງ, ໄມ້ກາງເຂນແມ່ນເຄື່ອງໝາຍແຫ່ງພັນທະສັນຍາແຫ່ງຮັກຂອງພຣະເຢຊູເຈົ້າທີ່ມີຕໍ່ມະນຸດ. ແລະແມ່ນໄມ້ກາງເຂນນີ້ແລທີ່ໄດ້ເສື່ອມຕໍ່ຄວາມຮັກຂອງພຣະເຈົ້າພຣະບິດາກັບມະນຸດ, ແລະໄດ້ເສື່ອມຕໍ່ລະຫວ່າງສະຫວັນແລະແຜ່ນດິນ. ອາໄສການຕາຍຂອງພຣະເຢຊູເຈົ້າເທິງໄມ້ກາງເຂນ, ມະນຸດທັງມວນຈຶ່ງໄດ້ຮອດຊີວິດແລະກາຍເປັນສິ່ງສ້າງໃໝ່ຂອງພຣະເຈົ້າຜ່ານທາງພຣະບຸດຂອງພຣະອົງ.

ໃນພຣະວໍລະສານວັນນີ້, ນັກບຸນມັກໂກກໍໄດ້ບອກໃຫ້ພວກເຮົາຮູ້ວ່າ ພຣະເຢຊູເຈົ້າຜູ້ເປັນອາດາມຄົນໃໝ່ໄດ້ຊະນະການປະຈົນຫລອກລວງຂອງຊາຕານໃນທີ່ປ່ຽວແລະເທວະດາໄດ້ມາຮັບໃຊ້ພຣະອົງ. ໝາຍວ່າແຕ່ນີ້ຕໍ່ໄປ, ຈະບໍ່ມີມານຮ້າຍໃດສາມາດມາທຳລາຍຜູ້ທີ່ເກີດໃໝ່ໃນພຣະເຢຊູເຈົ້າໄດ້. ຍ້ອນພຣະອົງໄດ້ຊະນະມັນແລ້ວ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮູ້ຈັກປະຖິ້ມສິ່ງທີ່ບໍ່ດີຕ່າງໆນາໆໃນຊີວິດຂອງລູກ ເພື່ອລູກຈະໄດ້ກັບມາຫາພຣະອົງຜູ້ເປັນອາດາມຄົນໃໝ່ ເພື່ອລູກຈະໄດ້ກາຍເປັນສິ່ງສ້າງໃໝ່ດ້ວຍອາໄສການໄຖ່ກູ້ຂອງພຣະອົງນັ້ນແລ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ